# ຮ້ານຂາຍຜັກອິນຊີຂອງຊາວນາ (ຕະຫຼາດຊາວນາ)

ໂຄງການ Savan PAD ໄດ້ສົ່ງເສີມຊາວນາໃນກຸ່ມເປົ້າໝາຍເພື່ອຂະຫຍາຍໂອກາດໃນການຂາຍໂດຍຊ່ວຍເຫຼືອດ້ານວັດຖຸອຸປະກອນໃນການຕັ້ງຕະຫຼາດຜັກຊາວນາ, ການພິມໃບປິວ ແລະ ແຜ່ນປ້າຍໂຄສະນາສໍາລັບການສົ່ງເສີມການຂາຍ, ການກະກຽມເຄື່ອງນຸ່ງ (ໝວກ, ຜ້າກັນເປື້ອນ) ໃຫ້ຊາວນາຜູ້ທີ່ຂາຍ.

ໃນເດືອນສິງຫາ ປີ 2020, ຈໍານວນຂອງຕະຫຼາດຜັກຊາວນາມີທັງໝົດແມ່ນ 5 ບ່ອນລວມທັງອີກໜຶ່ງກຸ່ມປູກຜັກອິນຊີບ້ານໂພນສີມ ເຊິ່ງໄດ້ເລີ່ມຈັດຕັ້ງປະຕິບັດກ່ອນມີໂຄງການ.
ໃນສະບັບນີ້, ພວກເຮົາຈະນໍາສະເໜີຕະຫຼາດຊາວນາໃນບາງໂຄງການເປົ້າໝາຍຂອງພວກເຮົາ.




## ຕະຫຼາດຜັກຊາວນາ ເມືອງທ່າປາງທອງ

ຕະຫຼາດຊາວນາເລີ່ມເປີດຂາຍແຕ່ວັນທີ 11 ເດືອນ 6 ປີ 2019. ມີຊາວນາທີ່ເຂົ້າຮ່ວມໂຄງງການທັງໝົດ 9 ຄອບຄົວຈາກໂຄງການເຊສາລະລອງ ທີ່ກໍາລັງປະຕິບັດການຂາຍໃນປະຈຸບັນ. ໃນມໍ່ໆນີ້, ເຂົາເຈົ້າໄດ້ປຸກຮ້ານ ນ້ອຍໆເປັນຂອງເຂົາເຈົ້າເພື່ອເອົາໃຈໃສ່ໃນການສືບຕໍ່ກິດຈະກໍາການຂາຍຂອງເຂົາເຈົ້າ.

- ມືຂາຍ : ທຸກໆ ວັນອັງຄານ ແລະ ວັນສຸກ
- ໂມງຂາຍ : ຂາຍແຕ່ 5:00-7:00 ເຊົ້າ
- ສະຖານທີ :ໃນຕະຫຼາດເມືອງທ່າປາງທອງ
- ຜັກທີ່ຂາຍ : ຫອມປ້ອມ,ຫອມບົ່ວ,ຜັກກາດ,ສະຫຼັດ, ຫົວກາດຂາວ,ກະຈ່ຽບຂຽວ. ນອກຈາກນັ້ນຊາວນາຍັງສາມາດປູກມັນຫວານສະຫວັນເພື່ອຕອບສະໜອງພາຍໃນຕະຫຼາດເມືອງທ່າປາງທອງອີກດ້ວຍ

ສົນໃຈຕິດຕໍ່: 030 9101 644 / 020 9939 8139





## ຕະຫຼາດຜັກຊາວນາ ເມືອງຊົນນະບູລີ

ຕະຫຼາດຊາວນາເລີ່ມເປີດຂາຍແຕ່ວັນທີ 24 ເດືອນ 8 ປີ 2019. ມີຊາວນາທີ່ເຂົ້າຮ່ວມໂຄງການທັງໝົດ 10 ຄອບຄົວຈາກໂຄງການໜອງບົວຫຼວງ.

- ມືຂາຍ : ທຸກໆ ວັນສຸກ
- ໂມງຂາຍ : ຂາຍແຕ່ 6:00-9:00 ເຊົ້າ
- ສະຖານທີ: ໃນຕະຫຼາດບ້ານໜອງບົວຫຼວງ
- ຜັກທີ່ຂາຍ: ຫອມປ້ອມ,ຫອມບົ່ວ,ສະຫຼັດ, ໝາກຖົ່ວດິນ,ໝາກຖົ່ວຍາວ,ໝາກແຕງ ນອກຈາກນັ້ນຊາວນາຍັງສາມາດປູກຜັກຫອມເສີມ ເພື່ອສົ່ງຂາຍໃຫ້ບໍລິສັດຍີ່ປຸ່ນ ທີ່ເມືອງແປກ ແຂວຊຽງຂວາງ.

**ພິເສດ: ຊາວນາຍັງສາມາດຜະລິດສົ່ງຮ້ານອາຫານອາທິດລະ 2 ຄັ້ງຄື ແລງວັນອາທິດ ແລະ ເຊົ້າວັນພຸດ*

ສົນໃຈຕິດຕໍ່: 020 9313 4658 / 020 9123 1011





## ຕະຫຼາດຜັກຊາວນາ ເມືອງພະລານໄຊ





ຕະຫຼາດຊາວນາເລີ່ມເປີດຂາຍແຕ່ວັນທີ 30 ເດືອນ 7 ປີ 2020. ມີຊາວນາທີ່ເຂົ້າຮ່ວມໂຄງການທັງໝົດ 6 ຄອບຄົວຈາກໂຄງການພະນົມໄຊ.

- ມີຂາຍ : ທຸກໆວັນຈັນ ແລະ ວັນພະຫັດ
- ໂມງຂາຍ : ຂາຍແຕ່ 5:00-7:00 ເຊົ້າ
- ສະຖານທີ່: ຕັ້ງຢູ່ຕະຫຼາດພະລານໃຕ້
- ຜັກທີ່ຂາຍ : ໝາກເຜັດປີ,ໝາກເຂືອມ້ວງ,ໝາກຖົ່ວຍາວ,ຫອມບົ່ວ,ຫອມປ້ອມ, ຜັກກາດ ແລະ ມັນຫວານສະຫວັນ

**ພິເສດ: ຊາວນາສາມາດປູກມາກເຂືອມ້ວງໄດ້ດີ ແລະ ເຫັນໄດ້ວ່າຊາວນາກ້າຫານໃນການຂາຍດ້ວຍຕົວເຂົາເອງຫຼາຍຂຶ້ນ*

ສົນໃຈຕິດຕໍ່: 030 4954 796 / 020 9860 4534

## ຕະຫຼາດຜັກຊາວນາ ເມືອງພີນ





ຕະລາດຊາວນາເລີ່ມເປີດຂາຍແຕ່ວັນທີ 29 ເດືອນ 7 ປີ 2020. ມີຊາວນາທີ່ເຂົ້າຮ່ວມໂຄງການທັງໝົດ 13 ຄອບຄົວຈາກໂຄງການຫ້ວຍສະຄວາງ ໃນປະຈຸບັນນີ້ກຳລັງເປັນທີ່ນິຍົມໃນຕະຫຼາດເຊທ່າມວກ.

- ມີຂາຍ : ທຸກໆ ວັນຈັນ,ວັນພຸດ ແລະ ວັນສຸກ
- ໂມງຂາຍ : ຂາຍແຕ່ 4:00-7:00 ເຊົ້າ
- ສະຖານທີ: ຕໍ່ໜ້າຕະຫຼາດເມືອງເຊທ່າມວກ
- ຜັກທີ່ຂາຍ: ຫອມປ້ອມ,ຫອມບົ່ວ,ຜັກກາດ,ສະຫຼັດ,ໝາກກະຈັ່ງບຂຽວ. ນອກຈາກນັ້ນຊາວນາຍັງສາມາດປູກມັນຫວານສະຫວັນເພື່ອຕອບສະໜອງພາຍໃນຕະຫຼາດເມືອງອີກດ້ວຍ

**ພິເສດ: ຊາວນາສາມາດປູກຫົວຜັກກາດແດງໄດ້ດີ ແລະ ລູກຄ້າມີຄວາມຕ້ອງການຫຼາຍຂຶ້ນ*

ສົນໃຈຕິດຕໍ່: 020 9629 2645 / 030 9897 590

## ຕະຫຼາດຜັກຊາວນາເມືອງໄຊພູທອງ ທີ່ຫາກໍ່ເປີດລ່າສຸດ



ຕະຫຼາດຊາວແມ່ນເປີດຢູ່ທີ່ບ້ານນາຄຳ ເມືອງໄຊພູທອງແຂວງສະຫວັນນະເຂດ ມີຊາວນາ 6 ຄອບຄົວຈາກບ້ານກຸດຕະປໍເຂົ້າຮ່ວມ ມີຂາຍໃນທຸກໆວັນເສົາ ເວລາ 13-17ໂມງ,ຖ້າຫາກວ່າທ່ານໃດມີໂອກາດກາຍໄປກໍ່ສາມາດແວ່ອຸດໜູນພວກເຮົາໄດ້ເດີ

** ພິເສດ: ລູກຄ້າຢາກໃຫ້ເປີດຂາຍ ອາທິດລະ 2 ວັນ (ວັນອັງຄານ ແລະ ເສົາ)*

ຜູ້ຕິດຕໍ່ : ທ່ານ ສີປະເສີດ ແລະ ທ່ານກິແກ້ວ
ເບີໂທ : 030 4641 045 / 020 5596 0489

ຈົດໝາຍແຈ້ງຂ່າວຂອງໂຄງການ ສະຫວັນເພັດ
ໂຄງການພັດທະນາ ກະສິກຳ ແບບມີສ່ວນຮ່ວມ ແຂວງສະຫວັນນະເຂດ (ສະຫວັນເພັດ)
ຕູ້ ປ.ນ. 16, ຂະແໜງຊົນລະປະທານ, ພະແນກ ກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ, (ໂທ : 041-252497)